**ມິຊຊາສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານ**
**ວັນທີ 21 ພະຈິກ 2021**



**ພຣະວໍລະສານໂດຍນັກບຸນຢວງ 18, 33ຂ-37**

ເມື່ອເວລາພຣະເຢຊູເຈົ້າປາກົດຕໍ່ໜ້າປີລາໂຕ, ປີລາໂຕທູນຖາມພຣະອົງວ່າ: "ທ່ານແມ່ນກະສັດຂອງພວກຢິວບໍ?" ພຣະເຢຊູເຈົ້າກ່າວຕອບວ່າ: "ທ່ານເວົ້າຄວາມນີ້ດ້ວຍຕົວທ່ານເອງບໍ, ຫລືໄດ້ຍິນຄົນອື່ນເວົ້າກັບທ່ານເຖິງຕົວເຮົາກ່ອນແລ້ວ?" ປີລາໂຕຕອບວ່າ: "ເຮົານີ້ແມ່ນຄົນຊາດຢິວບໍ? ແມ່ນຄົນຊາດຂອງທ່ານແລະພວກຫົວໜ້າສົງມອບທ່ານໃຫ້ເຮົາ. ດັ່ງນີ້ທ່ານໄດ້ທຳສິ່ງໃດ?"

ພຣະເຢຊູເຈົ້າກ່າວຕອບວ່າ: "ອານາຈັກຂອງເຮົາບໍ່ຢູ່ໃນແຜ່ນດິນນີ້ດອກ. ຖ້າວ່າອານາຈັກຂອງເຮົາຢູ່ໃນໂລກນີ້ບ່າວໄພ່ຂອງເຮົາກໍຈະພາກັນຕໍ່ສູ້ ເພື່ອບໍ່ໃຫ້ເຮົາຕ້ອງຕົກໃນມືຂອງພວກຢູເດວເປັນອັນຂາດ. ແຕ່ວ່າອານາຈັກຂອງເຮົາບໍ່ແມ່ນຢູ່ໃນໂລກນີ້." ປີລາໂຕເລີຍຖາມຊ້ຳອີກວ່າ: "ດັ່ງນັ້ນ, ທ່ານແມ່ນກະສັດບໍ?" ພຣະເຢຊູເຈົ້າກ່າວຕອບວ່າ: "ແມ່ນຄືທ່ານເວົ້າ. ເຮົາແມ່ນກະສັດ. ເຮົາເກີດມາແລະໄດ້ມາໃນໂລກນີ້ ເພື່ອເປັນຫລັກຖານພິຍານເຖິງຄວາມຈິງ, ຜູ້ໃດຢູ່ຝ່າຍຄວາມຈິງຜູ້ນັ້ນກໍຟັງສຽງຂອງເຮົາ". ປີລາໂຕເລີຍຖາມວ່າ: "ຄວາມຈິງແມ່ນຫຍັງ?"

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ເປັນວັນອາທິດສຸດທ້າຍຂອງປີພິທີກຳທີສອງ. ແລະກໍເປັນວັນທີ່ພຣະກຣິສຕະຈັກສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານ. ເປັນວັນທີ່ພຣະກຣິສຕະຈັກເຊື້ອເຊີນພວກເຮົາໃຫ້ຄິດພິດຈາລະນາເຖິງບັ້ນປາຍຊີວິດຂອງພວກເຮົາຢູ່ໃນແຜ່ນດິນນີ້ວ່າພວກເຮົາໄດ້ໃຊ້ຊີວິດໃນປີໜຶ່ງທີ່ຜ່ານມາຢ່າງໃດ? ແລະໃນເວລາດຽວກັນພວກເຮົາໄດ້ກຽມພ້ອມຫລືຍັງສຳລັບຈຸດໝາຍປາຍທາງຊີວິດຂອງພວກເຮົາໃນອານາຈັກຂອງພຣະເຈົ້າ.

ໃນບັນຍາກາດແຫ່ງການກະກຽມແລະຕື່ນເຝົ້າເພື່ອລໍຖ້າວັນທີ່ພຣະກຣິສໂຕເຈົ້າຈະສະເດັດກັບມາອີກຄັ້ງໜຶ່ງໃນສີນຸງຄຸນຂອງພຣະອົງ, ພຣະກຣິສຕະຈັກສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານ. ວັນສົມໂພດນີ້ມີຄວາມໝາຍແນວໃດ?

ສິ່ງທຳອິດທີ່ພວກເຮົາເຫັນໄດ້ໃນວາຈາຂອງພຣະເຈົ້າວັນນີ້ຄື ພຣະເຢຊູກຳລັງຖືກສອບສວນແລະຕັດສິນຈາກປີລາໂຕກະສັດຂອງແຜ່ນດິນນີ້. ປີລາໂຕຖາມພຣະເຢຊູເຈົ້າເຖິງສອງຄັ້ງວ່າ: ພຣະອົງແມ່ນກະສັດຂອງພວກຢູເດວບໍ? ພຣະເຢຊູເຈົ້າກໍຢືນຢັນຕໍ່ໜ້າປີລາໂຕວ່າ: ພຣະອົງແມ່ນກະສັດແທ້. ແຕ່ອານາຈັກຂອງພຣະອົງບໍ່ໄດ້ຢູ່ໃນແຜ່ນດິນນີ້. ແລະພຣະອົງມາ ບໍ່ແມ່ນເພື່ອເປັນນາຍແລະຕັດສິນຄົນອື່ນ. ເພາະຖ້າພຣະອົງມາເພື່ອຜາບແພ້ໂລກ ພຣະອົງກໍຈະສົ່ງກຳລັງທະຫານຂອງພຣະອົງມາເພື່ອທຳລາຍແຜ່ນດິນ; ແລະພຣະອົງເອງກໍຈະບໍ່ຖືກຈັບແລະຖືກສອບສວນຈາກປີລາໂຕ. ແຕ່ຍ້ອນພຣະອົງມາໃນໂລກນີ້ເພື່ອເປັນພິຍານເຖິງຄວາມຈິງອັນແມ່ນຄວາມຮັກຂອງພຣະບິດາເຈົ້າທີ່ມີຕໍ່ມະນຸດ. ແລະຍ້ອນການເປັນພິຍານເຖິງຄວາມຈິງນີ້ພຣະເຢຊູເຈົ້າຈຶ່ງຖືກຕັດສິນ, ຖືກທໍລະມານແລະຕາຍເທິງໄມ້ກາງເຂນ. ແຕ່ວັນທີສາມພຣະອົງຈະກັບເປັນຄືນມາ. ຜູ້ໃດເຊື່ອແລະກັບມາຫາພຣະອົງກໍຈະໄດ້ຮັບຄວາມຣອດອັນແມ່ນຊີວິດນິລັນດອນ. ນີ້ແລແມ່ນຄວາມໝາຍແລະຈຸດປະສົງຂອງການເປັນກະສັດຂອງພຣະເຢຊູເຈົ້າ. ພຣະອົງມາໃນແຜ່ນດິນນີ້ເພື່ອເຕົ້າໂຮມແລະນຳພາພວກເຮົາໄປສູ່ອານາຈັກຂອງພຣະອົງອັນແມ່ນເມືອງສະຫວັນນັ້ນເອງ. ສ່ວນພວກເຮົາຜູ້ເຊື່ອໃນພຣະອົງ, ພວກເຮົາໄດ້ໃຫ້ພຣະອົງນຳພາພວກເຮົາໄປອານາຈັກຂອງພຣະອົງບໍ? ຫລືອານາຈັກຂອງພວກເຮົາແມ່ນຢູ່ໃນແຜ່ນດິນນີ້?

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍເຕືອນສະຕິແລະຈິດໃຈພວກເຮົາໃຫ້ຫັນມາຫາພຣະເຢຊູເຈົ້າຜູ້ເປັນກະສັດ, ເປັນຫົນທາງແລະຄວາມຈິງທີ່ຈະນຳພວກເຮົາໄປສູ່ອານາຈັກຂອງພຣະອົງອັນແມ່ນຊີວິດນິລັນດອນນັ້ນແລ.

**ພາວະນາ**

ໂອພຣະເຢຊູ ກະສັດແຫ່ງໂລກຈັກກະວານ ອ້ອນວອນຊ່ວຍລູກເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ